ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມບັນຊີ

ເລກທີ /ກບຊ

ນະຄອນຫຼວງວຽງຈັນ, ວັນທີ ຕຸລາ 2017

# ໃບອະນຸຍາດ
## ດຳເນີນທຸລະກິດກວດສອບ

- ອີງຕາມ ກົດໝາຍ ວ່າດ້ວຍການບັນຊີ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 26 ທັນວາ 2013
- ອີງຕາມ ກົດໝາຍ ວ່າດ້ວຍ ການກວດສອບອິດສະລະ ສະບັບເລກທີ 51/ສພຊ, ລົງວັນທີ 22 ກໍລະກົດ 2014

**ກົມບັນຊີ ກະຊວງການເງິນ ອອກໃບອະນຸຍາດໃຫ້ແກ່:**

ຊື່ວິສາຫະກິດ : **ບໍລິສັດ**

ຊື່ເປັນພາສາ ສາກົນ : **Consultancy and Auditing Co.,Ltd**

ຊື່ຜູ້ອຳນວຍການ : ທ່ານ , ວັນເດືອນປີເກີດ , ສັນຊາດ ລາວ

ທີ່ຕັ້ງສຳນັກງານ : ບ້ານ ເມືອງ ນະຄອນຫຼວງວຽງຈັນ

ເບີໂທລະສັບ :

ປະເພດບໍລິການ : **ໃຫ້ບໍລິການດ້ານບັນຊີ ແລະ ກວດສອບ**

ທຶນຈົດທະບຽນ : 160.000.000 ກີບ

ບໍລິສັດ ຕ້ອງດຳເນີນທຸລະກິດ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ, ມາດຕະຖານການລາຍງານການເງິນ, ມາດຕະຖານວິຊາຊີບດ້ານການກວດສອບ, ຈັນຍາບັນດ້ານວິຊາຊີບ ທີ່ກະຊວງການເງິນ ກຳນົດອອກ.

ໃບອະນຸຍາດສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

<u>ໝາຍເຫດ</u>: ນັບແຕ່ປີທີສອງທີ່ມີການເຄື່ອນໄຫວ ບໍລິສັດຕ້ອງມີໃບຕິດຕາມການດຳເນີນທຸລະກິດປະຈຳປີຜ່ານມາ ເພື່ອສາມາດນຳໃຊ້ໃບອະນຸຍາດນີ້ໄດ້ຕາມລະບຽບກົດໝາຍ

**ຫົວໜ້າກົມ**

**ໝາຍເຫດ:**

1. ໃບອະນຸຍາດສະບັບນີ້ໃຊ້ໄດ້ສະເພາະຜູ້ເປັນເຈົ້າຂອງເທົ່ານັ້ນ, ຫ້າມມອບໂອນ ຫຼື ໃຫ້ບຸກຄົນອື່ນນຳໃຊ້ຢ່າງເດັດຂາດ.
2. ຫ້າມປອມແປງ ຫຼື ດັດແກ້ຂໍ້ຄວາມໃດໆໃນໃບອະນຸຍາດນີ້ ໂດຍບໍ່ໄດ້ຮັບອະນຸຍາດ, ຖ້າຝ່າຝືນຈະໄດ້ຮັບໂທດຕາມກົດໝາຍຂອງ ສປປ ລາວ.
3. ພາຍຫຼັງປິດບັນຊີປະຈຳປີ ບໍລິສັດຕ້ອງໄດ້ສົ່ງບົດລາຍງານການເຄື່ອນໄຫວ ພ້ອມດ້ວຍເອກະສານລາຍງານການເງິນປະຈຳປີ, ສະຖິຕິລູກຄ້າ, ສະຖິຕິພະນັກງານຂອງຕົນ ແລະ ຕາຕະລາງມອບພັນທະອາກອນໃຫ້ລັດ ແລະ ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ ໃຫ້ກົມບັນຊີ ກະຊວງການເງິນ ພາຍໃນສອງເດືອນພາຍຫຼັງປິດບັນຊີປະຈຳປີ ຕາມແບບຟອມທີ່ກົມບັນຊີໄດ້ກຳນົດ ເພື່ອກວດກາປະຈຳປີ ຖ້າບໍ່ດັ່ງນັ້ນ ຈະຖືກຕັກເຕືອນ, ສັ່ງໂຈະ ຫຼື ໃຫ້ຢຸດເຊົາການດຳເນີນວິຊາຊີບການບັນຊີ.
4. ຖ້າບໍລິສັດ ມີຈຸດປະສົງໂຈະການເຄື່ອນໄຫວຊົ່ວຄາວ ຫຼື ຢຸດເຊົາການດຳເນີນວິຊາຊີບ ຕ້ອງລາຍງານມາຍັງກົມບັນຊີ ກະຊວງການເງິນ ເພື່ອແຈ້ງຈຸດປະສົງຂອງຕົນ ຖ້າບໍ່ດັ່ງນັ້ນຈະຖືກປະຕິບັດມາດຕະ ການຕາມລະບຽບກົດໝາຍ.
5. ຖ້າບໍລິສັດຫາກບໍ່ດຳເນີນວິຊາຊີບການບັນຊີ 2 ປີ ຕິດຕໍ່ກັນ ໃບອະນຸຍາດສະບັບນີ້ ບໍ່ສາມາດນຳໃຊ້ໄດ້ ຫຼື ເປັນໂມຄະ.
6. ຖ້າບໍລິສັດມີການປ່ຽນແປງ ຫຼື ຍົກຍ້າຍ ທີ່ຕັ້ງສຳນັກງານ ຕ້ອງລາຍງານໃຫ້ກົມບັນຊີ ກະຊວງການເງິນ ເພື່ອປ່ຽນແປງເນື້ອໃນໃບອະນຸຍາດນີ້ ໃຫ້ຖືກຕ້ອງກັບສະຖານທີ່ຕັ້ງຕົວຈິງ.